ສຳນັກງານໃຫຍ່

ເລກທີ: 16 /ທຄຕລ.....2019.....

ນະຄອນຫຼວງວຽງຈັນ, ວັນທີ: 26-4-2019

ຂໍ້ຕົກລົງ
ວ່າດ້ວຍການຍົກຍ້າຍ ຮອງຜູ້ອຳນວຍການໃຫຍ່ ທຄຕລ

- ອີງຕາມລະບຽບຕຳແໜ່ງງານ, ມາດຖານເງື່ອນໄຂຂອງຕຳແໜ່ງງານ ແລະ ຂັ້ນຕອນການແຕ່ງຕັ້ງ-ສັບຊ້ອນພະນັກງານ ທຄຕລ (ສະບັບປັບປຸງປີ 2018) ສະບັບເລກທີ 030/ທຄຕລ.2018 ລົງວັນທີ 05/11/2018,
- ອີງຕາມແຈ້ງການຂອງ ກົມຈັດຕັ້ງ ແລະ ພະນັກງານ ທະນາຄານແຫ່ງ ສ ປ ປ ລາວ ສະບັບເລກທີ 99/ກຈພ ລົງວັນທີ **27/03/2019**,
- ອີງຕາມການຕົກລົງເຫັນດີເປັນເອກະພາບຂອງຄະນະພັກຮາກຖານ ແລະ ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຄັ້ງວັນທີ **23/04/2019**,
- ອີງຕາມມະຕິກອງປະຊຸມຂອງສະພາບໍລິຫານ ທຄຕລ ຄັ້ງວັນທີ **26/04/2019**.

ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕົກລົງ:

ມາດຕາ 1: ເຫັນດີຍົກຍ້າຍ **ທ່ານ ຄຳຊ່ຽນ ມິ່ງບຸບຜາ** ຮອງຜູ້ອຳນວຍການໃຫຍ່ ທຄຕລ ໃຫ້ໄປຮັບໜ້າທີ່ໃໝ່ຢູ່ ທະນາຄານແຫ່ງ ສ ປ ປ ລາວ ນັບແຕ່ວັນທີ ທະນາຄານແຫ່ງ ສປປລາວ ກຳນົດໃນຂໍ້ຕົກລົງແຕ່ງຕັ້ງ.

- **ສຳລັບເງິນເດືອນ** ແລະ ນະໂຍບາຍສະຫວັດດີການຕ່າງໆ ທຄຕລ ຈະຮັບຜິດຊອບຄິດໄລ່ໃຫ້ ຜູ້ກ່ຽວ ຮອດວັນທີ 31/05/2019.

ມາດຕາ 2: ທ່ານທີ່ຖືກຍົກຍ້າຍດັ່ງກ່າວ ກ່ອນຈະໄປຮັບໜ້າທີ່ວຽກງານໃໝ່ໃຫ້ມອບວຽກທີ່ຕົນຮັບຜິດຊອບທັງໝົດຄືນໃຫ້ ການຈັດຕັ້ງທີ່ຕົນສັງກັດ ຢ່າງເປັນລາຍລັກອັກສອນ ເປັນທີ່ຮຽບຮ້ອຍເສຍກ່ອນເພື່ອຈະໄດ້ມອບໃຫ້ຜູ້ອື່ນຮັບຊ່ວງຕໍ່ໄປ.

ມາດຕາ 3: ຄະນະອຳນວຍການ, ພະແນກຫ້ອງການບໍລິຫານ-ການເງິນ, ພະແນກຈັດຕັ້ງ-ພະນັກງານ, ທຸກພາກສ່ວນທີ່ກ່ຽວຂ້ອງ, ທ່ານທີ່ຖືກຍົກຍ້າຍຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດຕາມໜ້າທີ່ຂອງໃຜລາວ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ອຳນວຍການໃຫຍ່
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຂົງ ຈັນທະຈັກ